ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະມາຄົມມິດຕະພາບ ລາວ-ຍີ່ປຸ່ນ

ເລກທີ 03 /ສມລ-ຍ
ນະຄອນຫຼວງວຽງຈັນ, ວັນທີ 25 JUN 2020

# ຂໍ້ຕົກລົງ

ວ່າດ້ວຍການແຕ່ງຕັ້ງຄະນະຄະນະບໍລິຫານງານສະມາຄົມອະດີດນັກສຶກສາລາວຈາກຍີ່ປຸ່ນ ຊຸດທີ VII

- ອີງຕາມແຈ້ງການຂອງຄະນະພົວພັນຕ່າງປະເທດສູນກາງພັກ, ສະບັບເລກທີ 311/ຄຕພ.ພມຊ, ລົງວັນທີ 06 ມີນາ 2020.
- ອີງຕາມຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງສະມາຄົມມິດຕະພາບ ຂອງ ສປປ ລາວ ກັບຕ່າງປະເທດ, ສະບັບເລກທີ 0778/ຄຕພ.ພມຊ, ລົງວັນທີ 27 ເມສາ 2017.
- ອີງຕາມໜັງສືສະເໜີຂອງສະມາຄົມອະດີດນັກສຶກສາລາວຈາກຍີ່ປຸ່ນ ສະບັບເລກທີ 89/ສອລຍ-6, ລົງວັນທີ 16 ມິຖຸນາ 2020.

## ປະທານສະມາຄົມມິດຕະພາບ ລາວ-ຍີ່ປຸ່ນ ຕົກລົງ:

ມາດຕາ 1. ຕົກລົງແຕ່ງຕັ້ງ ບັນດາສະຫາຍຄະນະບໍລິຫານງານສະມາຄົມອະດີດນັກສຶກສາລາວຈາກຍີ່ປຸ່ນ ດັ່ງນີ້:

1) ທ່ານ ປອ ບັນດາໄຊ ລໍວັນໄຊ, ທີ່ປຶກສາອົດສະຫຼະທາງດ້ານວຽກງານເຕັກໂນໂລຊີ ແລະ ຂໍ້ມູນຂ່າວສານ, ເປັນປະທານ.
2) ທ່ານ ປອ ລີວາເມັງ ບົວປາວ, ຮອງຫົວໜ້າຫ້ອງການ ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ເປັນຮອງປະທານ.
3) ທ່ານ ໄພປະດິດ ແກ້ວທາວົງ, ຜູ້ຈັດການຝ່າຍແຜນການຍຸດທະສາດ, ບໍລິສັດຊິດສະຕໍລີ ຈຳກັດ, ເປັນເລຂາທິການ.
4) ທ່ານ ສົມມະໂນ ຄຳມະນີວົງ, ອຳນວຍການ ບໍລິສັດສິນໄຊບໍລິການຈັດຫາງານ ຈຳກັດ, ເປັນກຳມະການ.
5) ທ່ານ ສົມປາດຖະໜາ ປຸນຍະເຂດ, ຮອງຜູ້ຈັດການຫ້ອງການຜູ້ຕາງໜ້າ ບໍລິສັດ Sumitomo ເປັນກຳມະການ.

ມາດຕາ 2. ມອບໃຫ້ຜູ້ທີ່ຖືກແຕ່ງຕັ້ງຈົ່ງແບ່ງວຽກກັນລະອຽດ ແລະ ຈັດຕັ້ງປະຕິບັດວຽກງານຂອງສະມາຄົມອະດີດນັກສຶກສາລາວຈາກຍີ່ປຸ່ນ ໃຫ້ໄດ້ຮັບຜົນສຳເລັດເປັນຢ່າງດີ.

ມາດຕາ 3. ຂໍ້ຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ປະທານສະມາຄົມມິດຕະພາບ ລາວ-ຍີ່ປຸ່ນ

ສະມາຄົມ ມິດຕະພາບ ລາວ-ຍີ່ປຸ່ນ

ແສງເດືອນ ຫຼ້າຈັນທະບູນ